**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ**

ເລກທີ 239/ນຍ

ນະຄອນຫລວງວຽງຈັນ, ວັນທີ 18.05.2020.

# ດຳລັດ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງຄະນະກຳມະການຄຸ້ມຄອງໄພພິບັດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການຄຸ້ມຄອງໄພພິບັດ ສະບັບເລກທີ 71/ສພຊ, ລົງວັນທີ 24 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 4975/ຮສສ, ລົງວັນທີ 5 ທັນວາ 2019 ແລະ ສະບັບເລກທີ 683/ຮສສ, ລົງວັນທີ 6 ມີນາ 2020;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ, ສະບັບເລກທີ 79/ພນ, ລົງວັນທີ 22 ເມສາ 2020.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການຄຸ້ມຄອງໄພພິບັດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງຄະນະກຳມະການຄຸ້ມຄອງໄພພິບັດ ແນໃສ່ການຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການປະສານງານ, ຕິດຕາມ, ຊຸກຍູ້ສົ່ງເສີມ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ.

**ມາດຕາ 2 ຄະນະກຳມະການຄຸ້ມຄອງໄພພິບັດ**

ຄະນະກຳມະການຄຸ້ມຄອງໄພພິບັດ ແມ່ນ ການຈັດຕັ້ງໜຶ່ງບໍ່ປະຈຳການ, ມີພາລະບົດບາດ ເປັນເສນາທິການໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານຄຸ້ມຄອງໄພພິບັດ.

**ຄະນະກຳມະການຄຸ້ມຄອງໄພພິບັດ ປະກອບດ້ວຍ:**

1. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ;
2. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ;
3. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ;
4. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນບ້ານ.

ມາດຕາ 3 ທີ່ຕັ້ງ ແລະ ພາລະບົດບາດ

1. **ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ ຂຽນເປັນຕົວອັກສອນຫຍໍ້ວ່າ "**ຄພສ**" ແມ່ນ ການຈັດຕັ້ງໜຶ່ງ ຂອງລັດຖະບານ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ຊ່ວຍລັດຖະບານ ໃນການຄົ້ນຄວ້າ, ຊີ້ນຳ, ຕິດຕາມ, ກວດກາ, ຊຸກຍູ້ ບັນດາກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ.

2. **ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ຂຽນເປັນຕົວອັກສອນຫຍໍ້ວ່າ "**ຄພຂ**" ແມ່ນ ການຈັດຕັ້ງໜຶ່ງ ຂອງ ແຂວງ, ນະຄອນຫຼວງ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ຊ່ວຍຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງ ໃນການນຳພາຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ.

3. **ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ຂຽນເປັນຕົວອັກສອນຫຍໍ້ວ່າ "**ຄພມ**" ແມ່ນ ການຈັດຕັ້ງໜຶ່ງ ຂອງ ເມືອງ, ເທດສະບານ ແລະ ນະຄອນ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ຊ່ວຍຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ, ນະຄອນຫຼວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໃນການນຳພາຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ມາດຕະການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ.

4. **ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນບ້ານ**

ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນ ບ້ານ ຂຽນເປັນຕົວອັກສອນຫຍໍ້ວ່າ "**ຄພບ**" ແມ່ນ ການຈັດຕັ້ງໜຶ່ງຂອງບ້ານ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ຊ່ວຍຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ, ເທດສະບານ ແລະ ນະຄອນ ເປັນເຈົ້າການ ແລະ ໃຈກາງປະສານງານກັບພາກສ່ວນກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໄພພິບັດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 4 ໜ້າທີ່

1. **ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ ມີໜ້າທີ່ ດັ່ງນີ້:**
   1) ປະຕິບັດນິຕິກຳ ຂອງ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ ແລະ ນາຍົກລັດຖະມົນຕີ ວາງອອກຢ່າງເຂັ້ມງວດ;
   2) ຄົ້ນຄວ້າຮ່າງນະໂຍບາຍ, ສ້າງແຜນຍຸດທະສາດ, ນິຕິກຳ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ເພື່ອສະເໜີຕໍ່ລັດຖະບານພິຈາລະນາອະນຸມັດ;
   3) ຄົ້ນຄວ້າສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນຂອງສາກົນ ທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງໄພພິບັດ ເພື່ອນຳສະເໜີລັດຖະບານ ພິຈາລະນາລົງນາມ, ຮັບຮອງ, ໃຫ້ສັດຕະຍາບັນ, ເຂົ້າເປັນພາຄີ, ຖອນຕົວ ຫຼື ຍົກເລີກ;

4) ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ຂະແໜງການ ແລະ ທຸກພາກສ່ວນ ກ່ຽວກັບ ການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ໃນແຕ່ລະໄລຍະ ໃຫ້ແກ່ລັດຖະບານ;
5) ຄົ້ນຄວ້າ, ປະກອບຄຳເຫັນໃສ່ບັນດາແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ລວມທັງ ການພິຈາລະນາຮັບຮອງເອົາສົນທິສັນຍາ ແລະ ສັນຍາສາກົນ ໃນລະດັບພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
6) ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ, ສະໜອງຂໍ້ມູນ ຂ່າວສານ, ຜະລິດສື່ໂຄສະນາ, ສ້າງຂະບວນການດ້ວຍຫຼາຍຮູບການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ໃຫ້ພາກສ່ວນຕ່າງໆ ຢູ່ພາຍໃນ, ຕ່າງປະເທດ, ປະຊາຊົນ ຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມື, ສະໜັບສະໜູນ ໃນການຈັດຕັ້ງປະຕິບັດ ຢ່າງກວ້າງຂວາງ;
7) ໂຄສະນາປຸກຈິດສຳນຶກໃຫ້ແກ່ທຸກຊົ້ນຄົນໃນສັງຄົມ ທີ່ມີຄວາມເຂົ້າໃຈຕໍ່ໄພອັນຕະລາຍ, ຄວາມສ່ຽງ ແລະ ຜົນຮ້າຍຂອງໄພພິບັດ ແລະ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
8) ສ້າງລະບົບຖານຂໍ້ມູນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ເພື່ອນຳໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າ, ວາງນະໂຍບາຍ, ແຜນການ ແລະ ມາດຕະການແກ້ໄຂ ຢ່າງເໝາະສົມ;
9) ລາຍງານສະພາບຜົນເສຍຫາຍ ແລະ ຄວາມຕ້ອງການຊ່ວຍເຫຼືອທັງໄລຍະສຸກເສີນ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ແກ່ລັດຖະບານ;
10) ຊີ້ນຳຈັດຕັ້ງປະຕິບັດແຜນການ, ມາດຕະການ, ເຕັກນິກວິຊາການຕ່າງໆ ໃນການປ້ອງກັນ, ຄວບຄຸມ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ສູ່ສະພາບປົກກະຕິໂດຍໄວ;
11) ປຸກລະດົມກຳລັງແຮງທາງດ້ານວັດຖຸ, ທຶນຮອນ ແລະ ເຕັກນິກວິຊາການ ຈາກທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມໃນວຽກງານຄຸ້ມຄອງໄພພິບັດ;
12) ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊື້ອເຊີນ ແລະ ການອະນຸມັດຂອງຂັ້ນເທິງ;
13) ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
14) ຈັດຕັ້ງປະຕິບັດສັນຍາ, ອະນຸສັນຍາ, ຍຸດທະສາດ ແລະ ແຜນປະຕິບັດງານ ສາກົນຕ່າງໆ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ເປັນຕົ້ນ ແຜນປະຕິບັດງານເຊັນໄດວ່າດ້ວຍການຫຼຸດຜ່ອນຄວາມສ່ຽງໄພພິບັດ, ສັນຍາອາຊຽນ ວ່າດ້ວຍ ການຄຸ້ມຄອງໄພພິບັດ ແລະ ການຕອບໂຕ້ຕໍ່ເຫດການສຸກເສີນ ຢູ່ ສປປ ລາວ ແລະ ອື່ນໆ ທີ່ກ່ຽວຂ້ອງ ໃຫ້ໄດ້ຮັບຜົນດີ;
15) ສະເໜີລັດຖະບານພິຈາລະນາຮັບ ແລະ ຮ້ອງຂໍການຊ່ວຍເຫຼືອ ຈາກຕ່າງປະເທດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງບໍ່ສັງກັດລັດຖະບານ ຂອງຕ່າງປະເທດ ເມື່ອເກີດໄພພິບັດຂັ້ນຮ້າຍແຮງ ອັນພາໃຫ້ມີການສູນເສຍຊີວິດ ແລະ ຊັບສິນຂອງປະຊາຊົນ ເປັນຈຳນວນຫຼວງຫຼາຍ;
16) ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ກ່ຽວກັບການຄຸ້ມຄອງໄພພິບັດຕໍ່ ລັດຖະບານ ຢ່າງເປັນປົກກະຕິ;
17) ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**2. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ມີໜ້າທີ່ ດັ່ງນີ້:**

1) ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
2) ຄົ້ນຄວ້າ, ເຊື່ອມຊຶມ ເນື້ອໃນບັນດາສັນຍາ, ອະນຸສັນຍາ, ຍຸດທະສາດ ແລະ ແຜນປະຕິບັດງານ ສາກົນຕ່າງໆທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງໄພພິບັດ ທີ່ ສປປ ລາວ ເປັນພາຄີ ເປັນຕົ້ນ ສັນຍາອາຊຽນ ວ່າ

ດ້ວຍ ການຄຸ້ມຄອງໄພພິບັດ ແລະ ການຕອບໂຕ້ຕໍ່ເຫດການສຸກເສີນ, ແຜນປະຕິບັດງານເຊັນໃດ ວ່າດ້ວຍ ການຫຼຸດຜ່ອນຄວາມສ່ຽງໄພພິບັດ;

3) ປະກອບຄໍາເຫັນໃສ່ນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
4) ຄົ້ນຄວ້າ, ສ້າງ, ປັບປຸງ ແຜນງານ, ແຜນການ, ໂຄງການ ແລະ ງົບປະມານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງທ້ອງຖິ່ນຕົນ ໃນແຕ່ລະໄລຍະ;
5) ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ໃຫ້ປະຊາຊົນ, ພາກສ່ວນຕ່າງໆ ຢູ່ໃນຂັ້ນແຂວງ ຮັບຮູ້, ເຂົ້າໃຈ, ມີສະຕິ ແລະ ໃຫ້ການຮ່ວມມື ສະໜັບສະໜູນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງກວ້າງຂວາງ;
6) ໂຄສະນາປຸກຈິດສໍານຶກໃຫ້ແກ່ທຸກຊົ້ນຄົນໃນສັງຄົມ ມີຄວາມເຂົ້າໃຈຕໍ່ໄພອັນຕະລາຍ, ຄວາມສ່ຽງ ແລະ ຜົນຮ້າຍຂອງໄພພິບັດ ແລະ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
7) ສ້າງລະບົບຖານຂໍ້ມູນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ເພື່ອນໍາໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າ, ວາງນະໂຍບາຍ, ແຜນການ ແລະ ມາດຕະການແກ້ໄຂ ຢ່າງເໝາະສົມ;
8) ລາຍງານສະພາບຜົນເສຍຫາຍ ແລະ ຄວາມຕ້ອງການຊ່ວຍເຫຼືອທັງໄລຍະສຸກເສີນ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ແກ່ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນສູນກາງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາ ຊີ້ນໍາແກ້ໄຂໃຫ້ທັນກັບສະພາບການ;
9) ຊີ້ນໍາຈັດຕັ້ງປະຕິບັດແຜນການ, ມາດຕະການ, ເຕັກນິກວິຊາການຕ່າງໆ ໃນການປ້ອງກັນ, ຄວບຄຸມ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ສູ່ສະພາບປົກກະຕິໂດຍໄວ;
10) ປຸກລະດົມກໍາລັງແຮງທາງດ້ານວັດຖຸ, ທຶນຮອນ ແລະ ເຕັກນິກວິຊາການ ຈາກທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມໃນວຽກງານຄຸ້ມຄອງໄພພິບັດ;
11) ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສໍາມະນາ, ຝຶກອົບຮົມ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊື້ອເຊີນ ແລະ ການອະນຸມັດຂອງຂັ້ນເທິງ;
12) ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
13) ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໄພພິບັດ ຢູ່ຂັ້ນແຂວງ ໃນແຕ່ລະໄລຍະ ໃຫ້ແກ່ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນສູນກາງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຢ່າງເປັນປົກກະຕິ ແລະ ທັນເວລາ;
14) ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**3. ຄະນະກໍາມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ມີໜ້າທີ່ ດັ່ງນີ້:**

1) ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ນິຕິກໍາ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
2) ຄົ້ນຄວ້າ, ເຊື່ອມຊຶມ ເນື້ອໃນບັນດາສັນຍາ, ອະນຸສັນຍາ, ຍຸດທະສາດ ແລະ ແຜນປະຕິບັດງານ ສາກົນຕ່າງໆທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງໄພພິບັດ ທີ່ ສປປ ລາວ ເປັນພາຄີ ເປັນຕົ້ນ ສັນຍາອາຊຽນ ວ່າດ້ວຍ ການຄຸ້ມຄອງໄພພິບັດ ແລະ ການຕອບໂຕ້ຕໍ່ເຫດການສຸກເສີນ, ແຜນປະຕິບັດງານເຊັນໃດ ວ່າດ້ວຍ ການຫຼຸດຜ່ອນຄວາມສ່ຽງໄພພິບັດ;
3) ປະກອບຄໍາເຫັນໃສ່ນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
4) ຄົ້ນຄວ້າ, ສ້າງ, ປັບປຸງ ແຜນງານ, ແຜນການ, ໂຄງການ ແລະ ງົບປະມານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງທ້ອງຖິ່ນຕົນ ໃນແຕ່ລະໄລຍະ;

5) ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ, ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ໃຫ້ປະຊາຊົນ, ພາກສ່ວນຕ່າງໆ ຢູ່ໃນຂັ້ນແຂວງ ຮັບຮູ້, ເຂົ້າໃຈ, ມີສະຕິ ແລະ ໃຫ້ການຮ່ວມມື ສະໜັບສະໜູນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງກວ້າງຂວາງ;

6) ໂຄສະນາປຸກຈິດສຳນຶກໃຫ້ແກ່ທຸກຊັ້ນຄົນໃນສັງຄົມ ມີຄວາມເຂົ້າໃຈຕໍ່ໄພອັນຕະລາຍ, ຄວາມສ່ຽງ ແລະ ຜົນຮ້າຍຂອງໄພພິບັດ ແລະ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງໄພພິບັດ;

7) ສ້າງລະບົບຖານຂໍ້ມູນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ເພື່ອນຳໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າ, ວາງນະໂຍບາຍ, ແຜນການ ແລະ ມາດຕະການແກ້ໄຂ ຢ່າງເໝາະສົມ;

8) ລາຍງານສະພາບຜົນເສຍຫາຍ ແລະ ຄວາມຕ້ອງການຊ່ວຍເຫຼືອທັງໄລຍະສຸກເສີນ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ແກ່ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາ ຊີ້ນຳແກ້ໄຂໃຫ້ທັນກັບສະພາບການ;

9) ຊີ້ນຳຈັດຕັ້ງປະຕິບັດແຜນການ, ມາດຕະການ, ເຕັກນິກວິຊາການຕ່າງໆ ໃນການປ້ອງກັນ, ຄວບຄຸມ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ສູ່ສະພາບປົກກະຕິໂດຍໄວ;

10) ປຸກລະດົມກຳລັງແຮງທາງດ້ານວັດຖຸ, ທຶນຮອນ ແລະ ເຕັກນິກວິຊາການ ຈາກທົ່ວສັງຄົມ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມໃນວຽກງານຄຸ້ມຄອງໄພພິບັດ;

11) ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການເຊື້ອເຊີນ ແລະ ການອະນຸມັດຂອງຂັ້ນເທິງ;

12) ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;

13) ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໄພພິບັດ ຢູ່ຂັ້ນເມືອງ ໃນແຕ່ລະໄລຍະ ໃຫ້ແກ່ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ ແລະ ທັນເວລາ;

14) ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**4. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນບ້ານ ມີໜ້າທີ່ ດັ່ງນີ້:**

1) ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ມາດຕະການ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;

2) ເຜີຍແຜ່ລະບຽບການ, ແຜນຫຼຸດຜ່ອນຄວາມສ່ຽງ ແລະ ແຜນກຽມພ້ອມຕອບໂຕ້ສຸກເສີນໄພພິບັດ ໃຫ້ປະຊາຊົນພາຍໃນບ້ານຂອງຕົນຢ່າງເປັນປົກກະຕິ;

3) ເກັບກຳຂໍ້ມູນ, ສະຖິຕິ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດກິດຈະກຳ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;

4) ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;

5) ໂຄສະນາປຸກຈິດສຳນຶກໃຫ້ແກ່ປະຊາຊົນ ມີຄວາມເຂົ້າໃຈຕໍ່ໄພອັນຕະລາຍ, ຄວາມສ່ຽງ ແລະ ຜົນຮ້າຍຂອງໄພພິບັດ ແລະ ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງໄພພິບັດ;

6) ລາຍງານສະພາບຜົນເສຍຫາຍ ແລະ ຄວາມຕ້ອງການຊ່ວຍເຫຼືອທັງໄລຍະສຸກເສີນ ແລະ ຟື້ນຟູຫຼັງໄພພິບັດ ໃຫ້ແກ່ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ເພື່ອພິຈາລະນາ ຊີ້ນຳແກ້ໄຂໃຫ້ທັນກັບສະພາບການ;

7) ເປັນເຈົ້າການຊ່ວຍເຫຼືອສຸກເສີນ ໃນເວລາເກີດໄພພິບັດ;

8) ປຸກລະດົມກຳລັງແຮງທາງດ້ານວັດຖຸ, ທຶນຮອນ ແລະ ເຕັກນິກວິຊາການ ພາຍໃນທ້ອງຖິ່ນຂອງຕົນ ເຂົ້າຮ່ວມໃນວຽກງານຄຸ້ມຄອງໄພພິບັດ;

9) ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງໄພພິບັດ ໃຫ້ແກ່ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ຢ່າງເປັນປົກກະຕິ ແລະ ທັນເວລາ;

10) ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

ມາດຕາ 5 ຂອບເຂດສິດ

**1. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ ມີສິດ ດັ່ງນີ້:**

1) ແຈ້ງເຕືອນໄພພິບັດສຸກເສີນໃນຂັ້ນຄວາມຮັບຜິດຊອບຂອງຕົນ;
2) ສະເໜີ ລັດຖະບານ ເພື່ອພິຈາລະນາ ແລະ ປະກາດທ້ອງຖິ່ນ ຫຼື ເຂດໃດໜຶ່ງ ເປັນເຂດໄພພິບັດ;
3) ອອກຄຳສັ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ກຽມພ້ອມປະຕິບັດໜ້າທີ່ ຢ່າງທັນການ ໃນກໍລະນີເກີດໄພພິບັດສຸກເສີນ;
4) ສັ່ງຈ່າຍເງິນກອງທຶນຄຸ້ມຄອງໄພພິບັດຂັ້ນຂອງຕົນ, ກອງທຶນອື່ນໆ ທີ່ກ່ຽວຂ້ອງວຽກງານຄຸ້ມຄອງໄພພິບັດໂດຍກົງ ເຂົ້າໃນການຄວບຄຸມໄພພິບັດ;
5) ຈັດຕັ້ງໜ່ວຍງານສະເພາະກິດຂຶ້ນ ເພື່ອຮັບມືກັບໄພພິບັດທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ;
6) ສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ຂະແໜງການ ແລະ ທຸກພາກສ່ວນໃນການຄຸ້ມຄອງໄພພິບັດ;
7) ລະດົມທຶນດ້ວຍວິທີການຕ່າງໆ ທີ່ບໍ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ ເພື່ອຮັບໃຊ້ວຽກງານຄຸ້ມຄອງໄພພິບັດ;
8) ຮັບບໍລິຈາກ ເງິນ, ວັດຖຸ, ຊັບສິນຕ່າງໆ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
9) ເຊີນພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມປະຊຸມສຸກເສີນ ເພື່ອປຶກສາ ແລະ ຄົ້ນຄວ້າ ແກ້ໄຂບັນຫາກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
10) ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
11) ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ຢູ່ ພາຍໃນ ແລະ ຕ່າງປະເທດ;
12) ພົວພັນ, ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນ, ວິຊາການ ແລະ ຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ທຶນຮອນ ເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
13) ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ ຂອງລັດຖະບານ.

**2. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ມີສິດ ດັ່ງນີ້:**

1) ແຈ້ງເຕືອນໄພພິບັດສຸກເສີນໃນຂັ້ນຄວາມຮັບຜິດຊອບຂອງຕົນ;
2) ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອພິຈາລະນາ ແລະ ປະກາດທ້ອງຖິ່ນ ຫຼື ເຂດໃດໜຶ່ງ ເປັນເຂດໄພພິບັດ;
3) ອອກຄຳສັ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ກຽມພ້ອມປະຕິບັດໜ້າທີ່ ຢ່າງທັນການ ໃນກໍລະນີເກີດໄພພິບັດສຸກເສີນ;
4) ສັ່ງຈ່າຍເງິນກອງທຶນຄຸ້ມຄອງໄພພິບັດຂັ້ນຂອງຕົນ, ກອງທຶນອື່ນໆ ທີ່ກ່ຽວຂ້ອງວຽກງານຄຸ້ມຄອງໄພພິບັດໂດຍກົງ ເຂົ້າໃນການຄວບຄຸມໄພພິບັດ;
5) ຈັດຕັ້ງໜ່ວຍງານສະເພາະກິດຂຶ້ນ ເພື່ອຮັບມືກັບໄພພິບັດທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ;
6) ສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ຂະແໜງການ ແລະ ທຸກພາກສ່ວນ ໃນການຄຸ້ມຄອງໄພພິບັດ;
7) ລະດົມທຶນດ້ວຍວິທີການຕ່າງໆ ທີ່ບໍ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ ເພື່ອຮັບໃຊ້ວຽກງານຄຸ້ມຄອງໄພພິບັດ;

8) ຮັບບໍລິຈາກ ເງິນ, ວັດຖຸ, ຊັບສິນຕ່າງໆ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
9) ຮຽກເຊີນພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມປະຊຸມສຸກເສີນ ເພື່ອປຶກສາ ແລະ ຄົ້ນຄວ້າ ແກ້ໄຂບັນຫາ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
10) ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
11) ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ຢູ່ ພາຍໃນ ແລະ ຕ່າງປະເທດ;
12) ພົວພັນ, ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນ, ວິຊາການ ແລະ ຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ທຶນຮອນ ເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
13) ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ ຂອງລັດຖະບານ.

**3. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ມີສິດ ດັ່ງນີ້:**

1) ແຈ້ງເຕືອນໄພພິບັດສຸກເສີນໃນຂັ້ນຄວາມຮັບຜິດຊອບຂອງຕົນ;
2) ສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາ ແລະ ປະກາດທ້ອງຖິ່ນ ຫຼື ເຂດໃດໜຶ່ງ ເປັນເຂດໄພພິບັດ;
3) ອອກຄຳສັ່ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ກຽມພ້ອມປະຕິບັດໜ້າທີ່ ຢ່າງທັນການ ໃນກໍລະນີເກີດໄພພິບັດສຸກເສີນ;
4) ສັ່ງຈ່າຍເງິນກອງທຶນຄຸ້ມຄອງໄພພິບັດຂັ້ນຂອງຕົນ, ກອງທຶນອື່ນໆ ທີ່ກ່ຽວຂ້ອງວຽກງານຄຸ້ມຄອງໄພພິບັດໂດຍກົງ ເຂົ້າໃນການຄວບຄຸມໄພພິບັດ;
5) ຈັດຕັ້ງໜ່ວຍງານສະເພາະກິດຂຶ້ນ ເພື່ອຮັບມືກັບໄພພິບັດທີ່ເກີດຂຶ້ນ ຫຼື ອາດຈະເກີດຂຶ້ນ;
6) ສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ຂະແໜງການ ແລະ ທຸກພາກສ່ວນ ໃນການຄຸ້ມຄອງໄພພິບັດ;
7) ລະດົມທຶນດ້ວຍວິທີການຕ່າງໆ ທີ່ບໍ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ ເພື່ອຮັບໃຊ້ວຽກງານຄຸ້ມຄອງໄພພິບັດ;
8) ຮັບບໍລິຈາກ ເງິນ, ວັດຖຸ, ຊັບສິນຕ່າງໆ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
9) ຮຽກເຊີນພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມປະຊຸມສຸກເສີນ ເພື່ອປຶກສາ ແລະ ຄົ້ນຄວ້າ ແກ້ໄຂບັນຫາ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
10) ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ;
11) ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ຢູ່ ພາຍໃນ ແລະ ຕ່າງປະເທດ;
12) ພົວພັນ, ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນ, ວິຊາການ ແລະ ຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ທຶນຮອນ ເຂົ້າໃນວຽກງານຄຸ້ມຄອງໄພພິບັດ;
13) ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ ຂອງລັດຖະບານ.

**4. ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນບ້ານ ມີສິດ ດັ່ງນີ້:**

1) ແຈ້ງຂໍ້ມູນເຕືອນໄພພິບັດສຸກເສີນ;
2) ປຸກລະດົມກຳລັງແຮງພາຍໃນບ້ານ ເພື່ອປະຕິບັດໃຫ້ການຊ່ວຍເຫຼືອສຸກເສີນໃນເວລາເກີດໄພພິບັດ;

3) ຮຽກເຊີນປະຊຸມບ້ານ ເພື່ອຄົ້ນຄວ້າ ແລະ ວາງມາດຕະການຮັບມື ແລະ ແກ້ໄຂຊ່ວຍເຫຼືອສຸກເສີນ, ພ້ອມທັງ ເປັນເຈົ້າການໃນການປະຕິບັດໃຫ້ການຊ່ວຍເຫຼືອສຸກເສີນ ໃນເວລາເກີດໄພພິບັດ;
4) ຕິດຕາມ ສະພາບ ຫຼື ສະຖານະການຂອງເຫດການໄພພິບັດທີ່ເກີດຂຶ້ນໃນຂອບເຂດບ້ານຂອງຕົນ, ພ້ອມທັງ ສະເໜີ ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ພິຈາລະນາ ໃຫ້ການຊ່ວຍເຫຼືອແກ້ໄຂທັງສຸກເສີນ ແລະ ຟື້ນຟູຫຼັງໄພພິບັດ;
5) ເກັບກຳຂໍ້ມູນ, ສະຖິຕິ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດບັນດາກິດຈະກຳ ກ່ຽວກັບການຄຸ້ມຄອງໄພພິບັດ;
6) ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ ຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 6 ໂຄງປະກອບກົງຈັກ

ຄະນະກຳມະການຄຸ້ມຄອງໄພພິບັດ ມີກົງຈັກຊ່ວຍວຽກດັ່ງນີ້ ປະກອບມີ:

**1. ຂັ້ນສູນກາງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ ມີກອງເລຂາ ເປັນກົງຈັກຊ່ວຍວຽກ ໂດຍຖືເອົາ ກົມສັງຄົມສົງເຄາະ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຫ້ອງການ ຂຽນເປັນຕົວອັກສອນຫຍໍ້ວ່າ “**ກຄພສ**”.

**2. ຂັ້ນແຂວງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ມີກອງເລຂາ ເປັນກົງຈັກຊ່ວຍວຽກ ໂດຍຖືເອົາ ຂະແໜງສັງຄົມສົງເຄາະ, ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຫ້ອງການ ຂຽນເປັນຕົວອັກສອນຫຍໍ້ວ່າ “**ກຄພຂ**”.

**3. ຂັ້ນເມືອງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ມີກອງເລຂາ ເປັນກົງຈັກຊ່ວຍວຽກ ໂດຍຖືເອົາ ໜ່ວຍງານສັງຄົມສົງເຄາະ, ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນຫ້ອງການ ຂຽນເປັນຕົວອັກສອນຫຍໍ້ວ່າ “**ກຄພມ**”.

**4. ຂັ້ນບ້ານ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນບ້ານ ມີກອງເລຂາ ເປັນກົງຈັກຊ່ວຍວຽກ ໂດຍຖືເອົາ ໜ່ວຍງານວັດທະນະທຳ-ສັງຄົມ ເປັນກອງເລຂາ ຂຽນເປັນຕົວອັກສອນຫຍໍ້ວ່າ “**ກຄພບ**”.

### ມາດຕາ 7 ໂຄງປະກອບບຸກຄະລາກອນ

**ກ. ຂັ້ນສູນກາງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ ປະກອບດ້ວຍ:

1. ທ່ານ ຮອງນາຍົກລັດຖະມົນຕີ ເປັນປະທານ;
2. ທ່ານ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ ທັງເປັນຜູ້ປະຈຳການ;
3. ທ່ານ ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ເປັນຮອງປະທານ;
4. ທ່ານ ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງປະທານ;
5. ທ່ານ ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ;
6. ທ່ານ ຮອງລັດຖະມົນຕີກະຊວງສາທາລະນະສຸກ ເປັນກຳມະການ;
7. ທ່ານ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;

8. ທ່ານ ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນກຳມະການ;
9. ທ່ານ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
10. ທ່ານ ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
11. ທ່ານ ຮອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນກຳມະການ;

**ຂ. ຂັ້ນແຂວງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນແຂວງ ມອບໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ກຳນົດ ບົນພື້ນຖານຕາມການສະເໜີ ຂອງ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ຄວາມສອດຄ່ອງກັບເນື້ອໃນທີ່ໄດ້ກຳນົດໃນມາດຕາ **53** ຂອງ ກົດໝາຍວ່າດ້ວຍ ການຄຸ້ມຄອງໄພພິບັດ.

**ຄ. ຂັ້ນເມືອງ**

ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນເມືອງ ມອບໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ກຳນົດ ບົນພື້ນຖານຕາມການສະເໜີ ຂອງ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ແລະ ຄວາມສອດຄ່ອງກັບເນື້ອໃນທີ່ໄດ້ກຳນົດໃນມາດຕາ **54** ຂອງ ກົດໝາຍວ່າດ້ວຍ ການຄຸ້ມຄອງໄພພິບັດ.

**ງ. ຂັ້ນບ້ານ**

ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນບ້ານ ມອບໃຫ້ນາຍບ້ານ ເປັນຜູ້ກຳນົດ ບົນພື້ນຖານຄວາມສອດຄ່ອງກັບເນື້ອໃນທີ່ໄດ້ກຳນົດໃນມາດຕາ **57** ຂອງ ກົດໝາຍວ່າດ້ວຍ ການຄຸ້ມຄອງໄພພິບັດ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 8 ຫຼັກການ

ຄະນະກຳມະການຄຸ້ມຄອງໄພພິບັດ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານ ຂອງ ຄະນະກຳມະການຄຸ້ມຄອງໄພພິບັດ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງສະມາຊິກ ໃນຄະນະກຳມະການຄຸ້ມຄອງໄພພິບັດ;
3. ທຸກການເຄື່ອນໄຫວ ຂອງ ຄະນະກຳມະການຄຸ້ມຄອງໄພພິບັດ ແລະ ພະນັກງານ-ລັດຖະກອນ ຊ່ວຍວຽກແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ຫຼື ກະຊວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 9 ແບບແຜນວິທີເຮັດວຽກ

ຄະນະກຳມະການຄຸ້ມຄອງໄພພິບັດ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ຄະນະກຳມະການຄຸ້ມຄອງໄພພິບັດ ເຄື່ອນໄຫວວຽກງານແບບບໍ່ປະຈຳການ, ຖືເອົາລະບອບການປະຊຸມປະຈຳອາທິດ, ເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ເປັນຮູບການເຄື່ອນໄຫວເພື່ອກວດກາ, ຕິດຕາມ ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ, ພ້ອມທັງລາຍ

ງານປົກກະຕິໃຫ້ແກ່ລັດຖະບານ; ໃນກໍລະນີຈໍາເປັນ, ຄະນະກໍາມະການຄຸ້ມຄອງໄພພິບັດ ສາມາດເປີດກອງປະຊຸມວິສາມັນຂອງຄະນະຂຶ້ນ ເພື່ອພິຈາລະນາບັນຫາຮີບດ່ວນ;

3. ປະສານສົມທົບຢ່າງແໜ້ນແຟ້ນກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແນໃສ່ໝູນໃຊ້ກໍາລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຄຸ້ມຄອງໄພພິບັດ ໃຫ້ດີຂຶ້ນ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 12 ງົບປະມານ ແລະ ຕາປະທັບ

ຄະນະກໍາມະການຄຸ້ມຄອງໄພພິບັດ ນໍາໃຊ້ງົບປະມານຂອງລັດ, ບ້ວງເງິນແຮຂອງລັດຖະບານປະຈໍາປີ, ກອງທຶນຄຸ້ມຄອງໄພພິບັດ, ການຊ່ວຍເຫຼືອຈາກສັງຄົມ ແລະ ການຈັດຕັ້ງ ຂອງ ພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ແຫຼ່ງອື່ນໆ ຕາມກົດໝາຍກໍານົດ;

ຄະນະກໍາມະການຄຸ້ມຄອງໄພພິບັດ ມີກາປະທັບ ແລະ ເຄື່ອງໝາຍຂອງຕົນ ເພື່ອນໍາໃຊ້ເຂົ້າໃນວຽກງານທາງລັດຖະການ ຊຶ່ງຈະມີພຽງແຕ່ ຄະນະກໍາມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ ເທົ່ານັ້ນ ມີເຄື່ອງໝາຍ.

ກອງເລຂາ ຄະນະກໍາມະການຄຸ້ມຄອງໄພພິບັດ ມີກາປະທັບຂອງຕົນ ເພື່ອເຄື່ອນໄຫວວຽກງານ ທາງລັດຖະການ.

### ມາດຕາ 11 ການຜັນຂະຫຍາຍ

ມອບໃຫ້ ປະທານ ຄະນະກໍາມະການຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ແບ່ງຄວາມຮັບຜິດຊອບ ໃຫ້ແກ່ ຮອງປະທານ ແລະ ກໍາມະການ ແຕ່ລະທ່ານ; ກໍານົດ ພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ແບບແຜນວິທີເຮັດວຽກ ຂອງກອງເລຂາ ຄະນະກໍາມະການຄຸ້ມຄອງໄພພິບັດ ຕາມທີ່ໄດ້ກໍານົດໃນ ມາດຕາ 56 ຂອງ ກົດໝາຍວ່າດ້ວຍການຄຸ້ມຄອງໄພພິບັດ.

### ມາດຕາ 12 ການຈັດຕັ້ງປະຕິບັດ

ຄະນະກໍາມະການຄຸ້ມຄອງໄພພິບັດ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ບັນດາ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ແລະ ບັນດາທ່ານ ທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດຕາມດໍາລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 13 ຜົນສັກສິດ

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດໍາລັດ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະບັບເລກທີ່ 75/ນຍ, ລົງວັນທີ່ 28 ກຸມພາ 2018.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ